# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 4 ທັນວາ 2005 (12-4-2005)

---

## <u>ເປັນຫຍັງຈຶ່ງຕ້ອງຫ່ວງໃຍ?</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ( ໂຢນາ 4:1-11 )

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະເຈົ້າຕ້ອງການໃຫ້ໄພ່ພົນຂອງພຣະອົງໄດ້ແບ່ງປັນຄວາມຫ່ວງໃຍຂອງພຣະອົງໃຫ້ແກ່ຊົນຊາດທັງຫລາຍ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ຖືກແຕ່ງຂຶ້ນມາເພື່ອຊ່ອຍທ່ານໃຫ້ມີຄວາມຫ່ວງໃຍທີ່ເກີດຂຶ້ນຢູ່ໃນຕົວຂອງທ່ານເອງເພື່ອທີ່ຈະເຮັດໃຫ້ພຣະປະສົງໃນພາຣະກິດຂອງພຣະຄຣິດໃຫ້ໄດ້ຮັບຜົນສຳເຣັດດ້ວຍ:

* ຈະສາມາດທຳລາຍສິ່ງກີດກັ້ນບໍ່ໃຫ້ທ່ານໄດ້ມີສ່ວນຮ່ວມໃນການທີ່ຈະສະແດງອອກເຖິງຄວາມຫ່ວງໃຍຄືການທີ່ຈະໄປເຖິງຊົນຊາດທັງຫຼາຍ; ແລະ
* ເຮັດໃຫ້ກຳແພງທີ່ກີດກັ້ນທ່ານຈາກການທີ່ຈະແບ່ງປັນຄວາມຫ່ວງໃຍທີ່ທ່ານມີໃຫ້ອອກໄປເພື່ອທີ່ທ່ານຈະໄດ້ມີສ່ວນຮ່ວມໃນການທີ່ຈະໄປເຖິງຊົນຊາດທັງຫຼາຍ.

## ເປັນຫຍັງຂ້າພະເຈົ້າຈຶ່ງຄວນຈະມີຄວາມຫ່ວງໃຍຕໍ່ຄົນອື່ນວ່າເຂົາເຈົ້າຈະໄດ້ຍິນການປະກາດພຣະຄຳຂອງພຣະເຈົ້າເຣື່ອງຄວາມລອດພົ້ນ?

ທ່ານຕ້ອງການສິ່ງໃດໃນວັນຄຣິສມາດ? ຄືໄດ້ສະແດງອອກເຖິງຄວາມຮັກຕໍ່ກັນແລະກັນຄືການໃຫ້ຂອງຂວັນຊຶ່ງເຮັດໃຫ້ເກີດຄວາມຊົມຊື່ນຍິນດີແກ່ທຸກຄົນແລະຄອບຄົວດ້ວຍ. ແຕ່ຈົ່ງຈຳໄວ້ສເມີວ່າວັນຄຣິສມາດແມ່ນເປັນວັນທີ່ຕັ້ງໄວ້ສຳລັບເປັນວັນເກີດຂອງພຣະເຢຊູ, ບໍ່ແມ່ນສຳລັບພວກເຮົາຫລືລູກຫລານຂອງເຮົາ- ແລະພຣະຄຣິດຄວນຈະໄດ້ຮັບຂອງຂວັນທີ່ໃຫຍ່ທີ່ສຸດ.

ແມ່ນຫຍັງທີ່ພຣະເຢຊູຕ້ອງການໃນວັນຄຣິສມາດ? ພຣະອົງຊົງຕ້ອງການໃຫ້ໂລກນີ້ໄດ້ຮູ້ເຖິງຄວາມຮັກແລະໄພ່ພົນຂອງພຣະອົງໄດ້ສະແດງອອກແລະມີສ່ວນຮ່ວມໃນການປະກາດເຣື່ອງຂ່າວປະເສີດ. ໃນປື້ມຂອງໂຢນາທີ່ໄດ້ຮັບໃຊ້ຢູ່ໃນພຣະຄັມພີເດີມຄືໄດ້ເປັນພະຍານເຖິງຄວາມຫ່ວງໃຍຂອງພຣະເຈົ້າທີ່ມີຕໍ່ຊົນຊາດທັງຫຼາຍ ແລະບໍ່ພຽງແຕ່ຄົນອິສຣາເອນເທົ່ານັ້ນ. ເຣື່ອງລາວຂອງໂຢນາຍັງໄດ້ສະແດງເຖິງຄວາມເປັນພຣະເຈົ້າທີ່ມີຄວາມອົດທົນຕໍ່ໄພ່ພົນຂອງພຣະອົງ, ແລະໃຫ້ໂຢນາເປັນຕົວແທນພຣະອົງ. ພຣະເຈົ້າຊົງຕ້ອງການໃຫ້ໄພ່ພົນຂອງພຣະອົງໄດ້ນຳເອົາຄວາມຫ່ວງໃຍຂອງພຣະອົງໃຫ້ໄປເຖິງຄົນທີ່ຍັງຫລົງຫາຍຢູ່ໃນໂລກ.

## <u>ສຶກສາພຣະຄັມພີ</u>

### 1. <u>ຄວາມຮັກຂອງພຣະເຈົ້າ: ຍິ່ງໃຫຍ່ກວ່າເຂດແດນຂອງພວກເຮົາ:</u> ( ໂຢນາ 4: 1-3 )

ຈົ່ງວາດພາບເຖິງເຫດການເຊົ້າຂອງ 9 -11- 01 ທ່ານໄດ້ຮັບການເອີ້ນຈາກພຣະເຈົ້າໃຫ້ໄປແລະບອກຂ່າວເຣື່ອງວັນພິພາກສາໄດ້ມາເຖິງພວກເຂົາແລ້ວດ້ວຍການເຊັນຊື່ທ່ານໃສ່ໃນວົງມົນ. ເຖິງໃນເວລານີ້, ຖ້າທ່ານກໍຍັງໄດ້ຮັບຜົນສະທ້ອນຈາການສັ່ງສອນຄວາມຈິງຄືກັນກັບໂຢນາ, ທ່ານກໍຈະສາມາດເປັນພະຍານໄດ້ຢ່າງໜ້າອັສຈັນໃນການໂອ້ລົມດ້ວຍຜ່ານຈາກການໄດ້ຮັບຜົນຈາກພຣະຄຳຂອງພຣະເຈົ້າຄື: ທ່ານຈະເຫັນຄວາມດື້ດຶງຂອງຄົນບາບແຕ່ໄດ້ຍອມຮັບການປ່ຽນແປງແລະໄດ້ຮັບການອະພັຍຈາກພຣະເຈົ້າ. ທີ່ທ່ານໄດ້ເຫັນມາກ່ອນແລ້ວ, ແຕ່ບັດນີ້ເປັນເວລາທີ່ທ່ານເອງທີ່ຈະເປັນຜູ້ອອກໄປແບ່ງປັນຂ່າວປະເສີດທີ່ຈະນຳພຣະພອນນີ້ໄປຫາສັດຕຣູຂອງທ່ານທັງຫຼາຍ. ທ່ານສົມຄວນຈະ

ເຮັດຢ່າງໃດ? ແລະນີ້ກໍຄ້າຍຄືຄວາມຮູ້ສຶກຂອງໂຢນາໃນເວລາທີ່ເພິ່ນໄດ້ຮັບຄຳສັ່ງນີ້ເຊັ່ນດຽວກັນ.

ໂຢນາໄດ້ອາໄສຢູ່ທາງພາກເຫນືອຂອງອານາຈັກອິສຣາເອນຢູ່ໃກ້ກັບອັດຊີເຣັຽໃນລະຫວ່າງສັຕວັດທີ 8 ກ່ອນພຣະເຢຊູເກີດ ( 2 ກະສັດ 14: 23-25 ). ໃນເວລານັ້ນອັດຊີເຣັຽມີການກົດຂີ່ຂົ່ມເຫງປະຊາຊົນ, ເຮັດໃຫ້ປະຊາຊົນອິສຣາເອນມີຄວາມຄຽດແຄ້ນຕໍ່ສັດຕຣູ. ໃນລະຍະທີ່ໂຢນາໃຊ້ຊີວິດຢູ່ໃນເວລານັ້ນອັດຊີເຣັຽມີການຮ່ວມມືໃນການຕໍ່ສູ້ກັບສັດຕຣູຂອງເຂົາຄືທາງພາກຕາເວັນອອກແຕ່ບໍ່ແມ່ນອິສຣາເອນ. ແຕ່ການອິດສາຍັງຄົງມີຕໍ່ມາ,ອິສຣາເອນໃຊ້ອັດຊີເຣັຽຄືການຮ່ວມຕໍ່ສູ້ກັບເພື່ອນບ້ານແລະເຮັດໃຫ້ກຳລັງຂອງສັດຕູເຂັ້ມແຂງຄືການໜູນໃຊ້ເພື່ອນບ້ານຂອງເຂົາເອງ. ພຣະເຈົ້າໄດ້ສັ່ງໃຫ້ໂຢນາໃຫ້ອອກໄປເທສນາຢູ່ທີ່ນີນາເວ, ຄືເມືອງຫລວງຂອງອັດຊີເຣັຽ. ໂຢນາຈະເດີນທາງນ້ຳແທນ, ຄືຂີ່ເຮືອຈາກຈົບປາທີ່ຢູ່ໃກ້ກັບເອວີບ, ແລະເດີນທາງໄປທາງໃຕ້ຄືໄປທີ່ຕາຊີບ, ທີ່ໄກ 2000 ໄມກົງກັນກັນຂ້າມ! ເຫດຜົນຂອງເພິ່ນກໍຄືຫນີຈາກຢ້ານການລົ້ມເຫຼວແລະເກງກົວຄວາມສຳເຣັດ!

ພຣະເຈົ້າໄດ້ບອກແລະອອກຄຳສັ່ງອີກໃຫ້ໂຢນາໄປນີນາເວ. ເມື່ອຖືກລົມພາຍຸແລະຟອງນ້ຳທະເລພັດຢ່າງໜັກເຮັດໃຫ້ພວກລູກເຮືອຈຳເປັນຕ້ອງໂຍນໂຢນາຖິ້ມລົງໃນທະເລ. ພຣະເຈົ້າໄດ້ສະແດງຄວາມມະຫັສຈັນຄືໄດ້ສົ່ງປາໃຫຍ່ໃຫ້ມາແລະກືນໂຢນາໄວ້ໃນທ້ອງ. ຈາກນັ້ນມາ 3 ວັນປາກໍຄາຍເພິ່ນອອກໄວ້ທີ່ຫາດຊາຍແຫ່ງນຶ່ງ. ພຣະເຈົ້າໄດ້ເຮັດສິ່ງນີ້ເພື່ອຊ່ວຍຊີວິດຂອງໂຢນາ ເພື່ອຈະໄປປຸກໃຫ້ຈິດວິນຍານຊົນຊາດອັດຊີເຣັຽໄດ້ຊຸ່ມຊື່ນດ້ວຍຢາດນ້ຳໃຈໃນຄວາມຫ່ວງໃຍຂອງພຣະເຈົ້າທີ່ຊົງມີຕໍ່ພວກເຂົາ. ທຸກສິ່ງກໍເປັນໄປຕາມນັ້ນຄືເພື່ອໃຫ້ຄວາມຕ້ອງການອັນຮີບດ່ວນຂອງພຣະເຈົ້າຄືໂຢນາຈະໄດ້ອອກເດີນທາງໄປນີນາເວໃນທັນທີທັນໃດເພາະວ່າພຣະອົງໄດ້ຊົງກະກຽມທຸກສິ່ງໄວ້ໃຫ້ໂດຍຖືກກັບສະພາບທີ່ເກີດພັຍແຫ້ງແລ້ງໃນສັຕວັດທີ່ 765 ແລະ 759 BC . ແລະຕາມຄຳທຳນາຍໃນມ້ວນພຣະທັມໃນເດືອນ June 15 , ໃນສັຕວັດ 763 BC ( ຊຶ່ງເຮັດໃກ້ປະຊາຊົນເກີດຄວາມຢ້ານກົວທີ່ສຸດໃນເວລານັ້ນ ).

ໂຢນາໄດ້ເດີນທາງໄປນີນາເວ, ແຕ່ຄວາມຄຽດແຄ້ນແລະກຽດຊັງທີ່ເພິ່ນມີຕໍ່ຄົນອັດຊີເຣັຽທີ່ມີຢູ່ໃນຈິດໃຈຂອງເພິ່ນເປັນພະລັງໃຫ້ກັບໄປທີ່ນັ້ນ. ໂຢນາໄດ້ອອກສັ່ງສອນໃນເວລາທີ່ເດີນທາງກັບຝູງຄົນຫຼວງຫຼາຍແລະສິ່ງທີ່ເພິ່ນປະກາດນັ້ນເປັນພຽງຄຳງ່າຍໆ ຄື: " ໃນ 40 ວັນນີນາເວ ຈະຖືກປັ້ນບັນລັງ! " ( ໂຢນາ 3:4 ). ສິ່ງທີ່ໂຢນາໄດ້ປະກາດນີ້ໄດ້ເຮັດໃຫ້ປະຊາຊົນແລະເຈົ້າຊີວິດຂອງນີນາເວເກີດຄວາມສຳນຶກຜິດຄືພວກເຂົາໄດ້ຖືສິນແລະເອົາຖົງຜ້າປ່ານມານຸ່ງເປັນເຄື່ອງຫມາຍໃນການສາລະພາບ. ພວກເຂົາເຮັດຢ່າງນັ້ນເພາະບາງທີ " ພຣະເຈົ້າອາດຈະປ່ຽນພຣະທັຍຈາກພຣະພິໂຣດອັນຮຸນແຮງແລະບໍ່ທຳລາຍຫຼືລົງໂທດພວກເຂົາ." ( ຂໍ້ 10 ). **ແຕ່ໂຢຍາບໍ່ມີຄວາມພໍໃຈທີ່ພຣະເຈົ້າປ່ຽນພຣະທັຍ** ແລະສະແດງຄວາມເມດຕາຕໍ່ຊົນຊາດອັດຊີເຣັຽ ແລະເກີດຄວາມ**ບໍ່ພໍໃຈແລະຄຽດເກີດຂຶ້ນໃນໃຈ,** ຈົນຂໍໃຫ້ພຣະເຈົ້າເຮັດໃຫ້ຕາຍໄປເສັຽ.

ພຣະເຈົ້າມີຄວາມຮັກອັນຍິ່ງໃຫຍ່ກວ່າເຂດແດນ. ພື້ນຖານຂອງການປະກາດຕໍ່ທຸກຄົນໃນໂລກນີ້**ແມ່ນຢູ່ໃນຄວາມຮັກແລະຄວາມຫ່ວງໃຍຕໍ່ທຸກຊົນຊາດທັງຫມົດ.** ໂຢນາໄດ້ອະທິບາຍເຖິງ **ພຣະກະຣຸນາຄຸນ ຊົງຄຽດຊ້າ,** ແລະບໍຣິບູນດ້ວຍຄວາມຮັກອັນຫມັ້ນຄົງຊົງປ່ຽນພຣະທັຍຈາກພຣະພິໂຣດຮຸນແຮງເພື່ອພວກເຂົາຈະບໍ່ໄດ້ພິນາດ.( ອພຍ 34: 6-7 ; ພສສ. 86: 5-15 ). ຍ້ອນພຣະຄຸນທີ່ພຣະອົງຊົງປະທານອະພັຍໃຫ້ໃນຄັ້ງນັ້ນພວກເຮົາກໍໄດ້ມີສ່ວນໃນການຮັບໃນການອະພັຍຈາກພຣະອົງໃນຄວາມຜິດບາບຂອງພວກເຮົາ ແລະບາງທີພວກເຮົາກໍຊ້າໃນການທີ່ຈະແບ່ງປັນກັບຄົນອື່ນໆ. ພຣະຄຣິດໄດ້ສອນໃຫ້ພວກເຮົາອະທິຖານດັ່ງນີ້: " *ຂໍຊົງໂຜດຍົກໂທດຄວາມຜິດບາບຂອງຂ້າພະອົງ; ເຫມືອນຂ້າພຣະອົງຍົກໂທດຜູ້ທີ່ທຳຜິດຕໍ່ຂ້າພຣະອົງນັ້ນ* " ( ມທ 6:12 ). ຊົງສອນດັ່ງນີ້: " ເມື່ອທ່ານໄດ້ຮັບການໃຫ້ອະພັຍລ້າງ ແລ້ວ , ທ່ານຈົ່ງໃຫ້ອະພັຍແກ່ຄົນອື່ນລ້າ ງ ເຫມືອນກັນ " ( 10: 8 ). ພຣະເຈົ້າໄດ້ສັ່ງໃຫ້ພວກເຮົາສະແດງຄວາມເມດຕາຄືການໃຫ້ອະພັຍແກ່ຜູ້ອື່ນທັງໃນການອະທິຖານແລະການແບ່ງປັນ "ໃນຊີວິດດ້ວຍ".

## 2. <u>ໄພ່ພົນຂອງພຣະເຈົ້າ: ສັບສົນເຣື່ອງອັນໃດເປັນທີ່ນຶ່ງ:</u> ( ໂຢນາ. 4: 4-9 ).

ເຣື່ອງລາວຂອງໂຢນາໄດ້ສະແດງໃຫ້ຮູ້ເຖິງຄວາມສັບສົນອີກບໍ່ເຂົ້າໃຈໃນຫຼາຍຢ່າງ. ນີນາເວເປັນເມືອງໃຫຍ່ແລະທັງເປັນເມືອງເອກທີ່ມີປະຊາຊົນຕ່າງຊາດອື່ນໆ ແລະສັດລ້ຽງເປັນຈຳນວນຫຼວງຫຼາຍອາສັຍຢູ່ໃນນັ້ນ. ເຊື່ອຫມັ້ນວ່າ

ພຣະເຈົ້າຈະທຳລາຍໄດ້ຫມົດທຸກຢ່າງທັງຫມົດ. ກ່ອນນັ້ນ, ໂຢນາໄດ້ຫາທາງຫນີຈາກພຣະເຈົ້າໄປໃຫ້ໄກທີ່ສຸດ, ອິສຣາເອນບໍ່ແມ່ນດິນແດນທີ່ຢູ່ໃກ້ທະເລແຕ່ໂຢນາເລືອກທີ່ຈະຫນີໄປທາງທະເລຄືລົງເຮືອໄປກັບພວກພໍ່ຄ້າຕາມເສັ້ນທາງນ້ຳຄືເສັ້ນທາງເກັດເຊັນຈາກອິສຣາເອນຫານີນາເວ. ຫລັງຈາກໄປເຖິງເມືອງແລ້ວ, ໂຢນາຍັງຈະນັ່ງຢູ່ເທິງຈ້າຍພູຄືທາງຕາເວັນອອກຢູ່ທາງຫລັງຂອງເພິ່ນ, ຄິດວ່າບາງທີຍັງຈະໄດ້ເຫັນເຫດການທີ່ໄຟໄດ້ຕົກລົງມາຈາກຟ້າທຳລາຍເມືອງນີນາເວຍັງຈະມີໃຫ້ເຫັນຢູ່.

**ພຣະເຈົ້າໄດ້ຊົງກຳຫນົດໃຫ້ຕົ້ນຫມາກທຸ່ງໃຫ້ງອກຂື້ນມາ** ໃຫ້ແກ່ໂຢນາ ເພື່ອໃຫ້**ເປັນທີ່ກຳບັງຫົວຂອງເພິ່ນ.** ເພາະຕົ້ນຫມາກທຸ່ງນີ້ຈຶ່ງເຮັດໃຫ້ໂຢນາ**ມີຄວາມຍິນດີຫລາຍ.** ແລະໃນຄືນຕໍ່ມາຕົ້ນໄມ້ນັ້ນກໍ**ໄດ້ຕາຍຍ້ອນຕົວຫນອນ.** ເຫດການນີ້ເກີດຂື້ນເຮັດໃຫ້ທີ່ເພິ່ງສຸດທ້າຍຂອງໂຢນາຫມົດໄປ, **ອີກທັງຕາເວັນກໍສ່ອງແສງກ້າ,** ແລະພຣະເຈົ້າກໍຊົງກຳຫນົດໃຫ້**ລົມຕາເວັນອອກທີ່ຮ້ອນແຮງພັດມາ**ແລະເພິ່ນກໍເກີດຄວາມອ່ອນເພັຽ ໃນທີ່ສຸດເພິ່ນກໍຂໍໃຫ້ພຣະເຈົ້າເຮັດໃຫ້ເພິ່ນຕາຍອີກເປັນຄັ້ງທີສອງ: " ຜູ້ຂ້າຂໍຕາຍເສັຽກໍດີກວ່າຢູ່ "" ແມ່ນຫຍັງທີ່ເຮັດໃຫ້ໂຢນາເປັນທຸກ-ຄືການທີ່ຈະໃຫ້ອະພັຍເມືອງນີນາເວແລະມີຄວາມຊົມຊື່ນຍິນດີກັບສັນຕິສຸກຂອງພຣະເຈົ້າ ; ແຕ່ແມ່ນຄວາມຂົມຂື່ນທົນທຸກ, **ຄວາມຄຽດແຄ້ນຈົນເຖິງຂັ້ນຢາກຈະຕາຍ.**

ທ່ານເຄີຍຮູ້ຜູ້ໃດບໍ່ທີ່ມີຄວາມຄຽດແຄ້ນຫລາຍທີ່ສຸດ? ມີບາງຄົນສັນນິຖານວ່າໂຢນາມີຄວາມຄຽດແຄ້ນເກີດຂື້ນເພາະຄຳທຳນວາຍບໍ່ເກີດເປັນຄວາມຈິງ, ແຕ່ເຫດການນີ້ກໍໄດ້ເກີດຂື້ນເປັນຈິງໃນທີ່ສຸດອີກ 150 ປີຕໍ່ມາ, ນີນາເວກໍຖືກທຳລາຍເພື່ອຈະໄດ້ຮູ້ແລະເຫັນວ່າພຣະເຈົ້າຍັງຄົງເປັນຢູ່ຕລອດໄປ ພຣະພິໂຣດຂອງພຣະເຈົ້າເປັນຄວາມຈິງແລະເປັນສາເຫດໃຫ້ມີການປ່ຽນແປງ ເພື່ອບໍ່ໃຫ້ເປັນໄປຕາມຄວາມປາຖນາຂອງໂຢນາເທົ່ານັ້ນ-ແລະພຣະເຈົ້າກໍຈະຊົງເປັນຜູ້ຊະນະຢູ່ສເມີ. ພຣະເຈົ້າໄດ້ເລືອກໃຊ້ໂຢນາແລະໄດ້ມີຄຳສັ່ງໃຫ້ເພິ່ນເຮັດຕາມຈຸດປະສົງທີ່ພຣະອົງໄດ້ຊົງກຳຫນົດໄວ້ໃຫ້ປະຕິບັດຕາມ, ແຕ່ພຣະເຈົ້າຍັງຄົງມີຄວາມຮັກຕໍ່ໂຢນາຢູ່ແລະຍັງເຮັດໃຫ້ໂຢນາໄດ້ເຫັນຄວາມມີເມດຕາຂອງພຣະອົງແລະເຮັດໃຫ້ເຫັນເຖິງການໃຫ້ອະພັຍໃນການທີ່ຊາວເມືອງໄດ້ຮູ້ສຶກສຳນຶກຜິດໃນທີ່ສຸດ.

ໃນຖານະທີ່ພວກເຮົາເປັນຄົນຂອງພຣະອົງ, ກໍຄືໂຢນານັ້ນແຫລະ, ພວກເຮົາອາດຈະມີຄວາມສັບສົນ, ແລະເຂົ້າໃຈຜິດໃນພຣະປະສົງຂອງພຣະອົງ. ເພາະພວກເຮົາຍັງຄົງດຳຣົງຊີວິດຢູ່ໃນໂລກທີ່ມີຄວາມເຫັນແກ່ຕົວແລະຢູ່ໃນລະຫວ່າງຂອງການຫລົງໃນວັດຖຸສິ່ງຂອງຊຶ່ງພວກເຮົາຊົມໃຊ້ເງິນຄຳໃນການຊື້ເຄື່ອງເຫລັ້ນ, ແຕ່ພວກເຮົາໄດ້ຖວາຍເຮັດໃຫ້ພຣະທັຍຂອງເຈົ້າຊື່ນຊົມຍິນດີທີ່ສຸດ- ຄືໃຫ້ການຊ່ວຍເຫລືອໃນການປະກາດອອກໄປທາງຕ່າງປະເທດ. ພວກທີ່ໄດ້ຄົ້ນຄວ້າແລະຮູ້ຜົນມາແລ້ວວ່າຄຣິສຕຽນທີ່ອະເມຣິກາ, ໄດ້ໃຫ້ການອຸ້ມຊູແລະມີສ່ວນຫລາຍທີ່ສຸດຕໍ່ງົບປະມານລາຍໄດ້ຂອງປີ 1930 ແລະພວກເຮົາກໍຍັງຄົງເຮັດຢ່າງນັ້ນຢູ່ເຖິງປັດຈຸບັນນີ້. ພຣະເຈົ້າໄດ້ເອີ້ນພວກເຮົາໃຫ້ເປັນພະຍານໃຫ້ພຣະອົງ( ເພື່ອພຣະອົງ), ແບ່ງປັນກັບຄອບຄົວ, ເພື່ອນບ້ານຂອງເຮົາ, ເພື່ອນຂອງເຮົາ, ແລະທຸກຄົນທີ່ຫລົງຫາຍຢູ່ໃນໂລກເຖິງເຣື່ອງທີ່ພຣະອົງໄດ້ຊົງກະທຳຢ່າງໃດໃນຊີວິດຂອງພວກເຮົາ.

ຫລາຍກວ່ານັ້ນ, ພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ, ຄືສົ່ງພຣະອົງລົງມາຈາກສວັນໃຫ້ມາບັງເກີດໃນໂລກມະນຸດ, ແລະຊົງອະນຸຍາດໃຫ້ພຣະອົງໄດ້ພົບກັບການປະຕິເສດ, ຫມິ່ນປມາດ, ແລະຖວາຍຊີວິດເປັນເຄື່ອງບູຊາເພື່ອໄຖ່ໂທດຄວາມຜິດບາບດ້ວຍພຣະບຸດນີ້ເພື່ອມະນຸດຈະໄດ້ຮັບຄວາມລອດພົ້ນ. ໃນຖານະທີ່ພວກເຮົາເປັນໄພ່ພົນຂອງພຣະອົງ, ພວກເຮົາຄວນຈະໃຫ້ດ້ວຍໃຈຍິນດີ, ໃຫ້ດ້ວຍຄວາມເຕັມໃຈ, ອະທິຖານດ້ວຍໃຈຮ້ອນຮົນແລະຍອມເສັຽສະລະດ້ວຍໃຈຍິນດີ ດັ່ງນັ້ນແຫລະຈຶ່ງຈະເຮັດໃຫ້ທຸກຄົນຢູ່ໃນໂລກນີ້ອາດຈະຍິນເຣື່ອງຂ່າວປະເສີດ. ທັງຫມົດ. ແຕ່ເຖິງວ່າຈະມີສິ່ງທີ່ເກີດຂື້ນຢ່າງຖືກຕ້ອງສຳລັບພວກເຮົາທີ່ຈະເຮັດການເຫລົ່ານີ້, ຖ້າຫາກເປັນຄວາມຮັບຜິດຊອບຂອງພວກເຮົາແລ້ວ, ພວກເຮົາກໍຈຶ່ງມີຄວາມອົດກັ້ນໃນຄວາມຂົມຂື່ນແລະຄວາມຄຽດຊັງໃນຫົວໃຈຂອງພວກເຮົາກັບພຣະຈົ້າ, ເຫມືອນກັບໂຢນາ, ໃຫ້ເຮົາເຕັມໄປດ້ວຍການຂອບພຣະຄຸນທີ່ພຣະອົງໄດ້ຊົງໃຫ້ມີການປ່ຽນແປງ.

## 3. <u>ຄົນທີ່ຫລົງຫາຍ: ຂ້າພະເຈົ້າບໍ່ຫ່ວງໃຍບໍ່?</u> ( ໂຢນາ: 410-11 )

ໃນຖານະທີ່ຂ້າພະເຈົ້າເປັນຜູ້ປະກາດ ຂ້າພະເຈົ້າກໍມີຄວາມຜູກພັນຢ່າງດຽວກັນກັບໂຢນາຄືຣິມພຣະຄຸນທີ່ພຣະເຈົ້າຊົງໄດ້ຈັດຫາໃຫ້. ມີຫລາຍຄັ້ງທີ່ພວກຜູ້ປະກາດທີ່ຮັບໃຊ້ຢູ່ໃນຕ່າງຖິ່ນຕ່າງແຜ່ນດິນ, ສູ້ທົນກັບການຮຽນຮູ້ພາສາ, ວັທນະທັມ, ຊີວິດການເປັນຢູ່, ຄວາມຮຸນແຮງຂອງດິນຟ້າອາກາດແລະຄວາມຫຍຸ້ງຍາກຈາກບັນຫາຕ່າງໆ, ມີພຽງຄວາມຊຸ່ມຊື່ນພຽງເລັກໆ ນ້ອຍໆ -ຕົວຢ່າງ, ຮ້ານອາຫານແລະເພື່ອນໆ ທີ່ໃກ້ຊິດ. ເມື່ອຮ້ານອາຫານຖືກປິດລົງຍ້ອນເສຖກິດການຄ້າຕົກຕໍ່າ, ເພື່ອນໆ ທີ່ໃກ້ຊິດຖືກຍົກຍ້າຍໄປບ່ອນອື່ນ, ພວກເຮົາກໍເກີດຄວາມເຫັນແກ່ຕົວຄືຄວາມໂສກເສົ້າຄືກັນກັບໂຢນາ. ມີຫລາຍກວ່ານຶ່ງຄັ້ງ, ທີ່ພຣະວິນຍານຂອງພຣະເຈົ້າໄດ້ບອກທົນທາງໃຫ້ຂ້າພະເຈົ້າດ້ວຍເຫດການເຫລົ່ານີ້.

ພຣະເຈົ້າໄດ້ສະແດງຄວາມເມດຕາໃຫ້ໂຢນາໄດ້ເຫັນຄວາມເຫັນແກ່ຕົວແລະຄວາມກຽດຊັງ, ແລະການຕໍ່ສູ້ທີ່ເພິ່ນມີກັບເມືອງນີນາເວ. ໂຢນາມີຄວາມ**ສົນໃຈຫ່ວງໃຍຕົ້ນຫມາກຫຸ່ງ**ທີ່ໄດ້ໃຫ້ຮົ່ມເງົາແກ່ເພິ່ນ, ໂດຍທີ່ເພິ່ນ**ບໍ່ໄດ້ເປັນຜູ້ປູກເລີຍ.** ມັນຈະມີຄວາມແຕກຕ່າງກັນປານໃດກັບການທີ່ພຣະເຈົ້າໄດ້ເຮັດກັບປະຊາຊົນຊາວເມືອງນີນາເວ, ເພາະພຣະອົງເປັນຜູ້ຊົງສ້າງເຂົາຂຶ້ນມາເຫມືອນກັນ. ທີ່ມີຢູ່ໃນຮ່າງກາຍແລະການດໍາຣົງຊີວິດປະຈໍາວັນຂອງພວກເຂົາ, ໄດ້ເປັນພະຍານໂດຍຜ່ານທາງເຂົາໄປເຖິງພຣະຜູ້ສ້າງ, ແລະມີຄວາມຫ່ວງໃຍພວກເຂົາຢ່າງເລິກເຊິ່ງ. " **ເຮົາບໍ່ຄວນເປັນຫ່ວງຫລື?** " ພຣະເຈົ້າຖາມໂຢນາ. ຄໍາຖາມນີ້ກໍຍັງຄົງດັງກ້ອງຢູ່ໃນປະສາດຂອງພວກເຮົາ: ພວກເຮົາສົນຄວນຫລື? ໃນຖານະທີ່ເປັນໄພ່ພົນຂອງພຣະເຈົ້າ, ເຮົາຈະບໍ່ສົນໃຈນໍາຄົນທີ່ຫລົງຫາຍບໍ່? ຖ້າພວກເຮົາຫາກເປັນໄພ່ພົນຂອງພຣະອົງແທ້, ແລະໄດ້ຮັບການຊົງໄຖ່ແລ້ວຈາກພຣະໂລຫິດຂອງພຣະຄຣິດ, ແລະມີພຣະວິນຍານບໍຣິສຸດສະຖິດຢູ່ນໍາ, ຄວາມຫ່ວງໃຍຂອງພຣະອົງກໍແມ່ນຄວາມຫ່ວງໃຍອັນດຽວກັນກັບພວກເຮົາບໍ່ແມ່ນຫລື?

ໃນປຶ້ມພຣະທັມໂຢນາໄດ້ສອນໃຫ້ຮູ້ກ່ຽວກັບຄວາມຮັກຂອງພຣະເຈົ້າ ແລະຄວາມຫ່ວງໃຍຂອງພຣະອົງທີ່ມີຕໍ່ຄົນທັງປວງທີ່ໄດ້ກັບໃຈໃຫມ່ແລະໄດ້ປະຕິບັດຕາມຜູ້ປະກາດພຣະທັມໂຢນາກໍຄືປະຊາຊົນຊາວອັດຊີເຣັຽ. ໂຢນາສາມາດຂຽນປຶ້ມພຣະທັມນີ້ຕາມໃຈປາຖນາຂອງຕົນເອງ, ໂດຍບອກກ່າວເຣື່ອງລາວຂອງຕົນເອງແລະບອກເຖິງຄວາມດື້ດຶງທີ່ມີ ແລະພຣະເຈົ້າໄດ້ທໍາລາຍສິ່ງກີດກັ້ນນັ້ນເສັຽເພື່ອທີ່ຈະເຮັດໃຫ້ເປັນໄປຕາມແຜນການຂອງພຣະເຈົ້າໄດ້ບໍ່? ພຣະຄຣິດໄດ້ໃຫ້ການຫນູນໃຈສາວົກຂອງພຣະອົງບໍ່ໃຫ້ເບິ່ງຕົວເອງແຕ່ໃຫ້ເບິ່ງໄປໃນຄົນຮອບຂ້າງ: " ເງີຍຫນ້າເບິ່ງທົ່ງນາທີ່ມີເຂົ້າເຫລືອງເຕັມທົ່ງແລະກໍເຖິງເວລາເກັບກ່ຽວແລ້ວ " (ຢຮ 4: 35 ). ແລະພຣະທັມຂໍ້ນີ້ກໍຍັງໃຊ້ໄດ້ໃນປັດຈຸບັນນີ້ຢູ່.

ຫລັງຈາກສົງຄາມໂລກຄັ້ງທີ 2, ຄົນການປະກາດຂອງຄຣິສຕຽນຈາກອະເມຣິກາໄດ້ອອກໄປເຖິງປະເທດຍີ່ປຸ່ນ, ເຍັຽຣະມັນ ແລະອ້ອມແຂນຂອງສັດຕຣູໄດ້ກອດຮັດຄືການເປັນຕົວແທນຂອງຄວາມລອດພົ້ນໃນພຣະເຈົ້າທີ່ໄດ້ຊົງປະທານໃຫ້ໃນພຣະເຢຊູຄຣິດ, ແລະສາມາດທີ່ຈະເປັນອ້າຍເອື້ອຍນ້ອງໃນພຣະຄຣິດ.

ພວກເຮົາສາມາດຫາຄວາມຮັກໄດ້ຈາກພຣະເຈົ້າເພື່ອຄົນທັງຫລາຍຈະໄດ້ຮູ້ແລະເຂົ້າໃຈຈຸດປະສົງແລະເປົ້າຫມາຍທີ່ສູງສົ່ງກໍຄືການໄດ້ອະນຸຍາດໃຫ້ໄດ້ມີການແບ່ງປັນແລະໄດ້ຮັບພຣະພອນຂອງຂ່າວປະເສີດ, ແລະພວກເຮົາກໍໄດ້ຮັບພຣະຄຸນໃຫ້ພວກເຮົາໄດ້ຜ່ານຂໍ້ທົດສອບຄືການທໍາລາຍກໍາແພງທີ່ກີດກັ້ນນັ້ນລົງໄດ້ໃຫ້ເຫັນເຖິງຄວາມຈິງໃນພຣະອົງ. ໃນຄວາມຫ່ວງໃຍຊາວໂລກທີ່ຫລົງຫາຍຈະປ່ຽມລົ້ນໄປດ້ວຍຄວາມປາຖນາທີ່ຈະອອກໄປປະກາດ. ໃນຂນະທີ່ພວກເຮົາຍ່າງໄປຄຽງຂ້າງແລະນະມັສການພຣະອົງຢ່າງໃກ້ຊິດ ພວກເຮົາກໍຈະໄດ້ພົບກັບຄວາມຊື່ນຊົມຍິນດີທີ່ຈະມີສ່ວນຮ່ວມກັບການປະກາດແລະເພື່ອທີ່ຈະຮັກຄົນທີ່ຢູ່ໂລກນີ້!

ເຣື່ອງລາວຂອງໂຢນາໄດ້ບອກເຖິງເຫດການລ່ວງຫນ້າຂອງຜູ້ປະກາດພຣະທັມທີ່ໄດ້ຂຽນໄວ້ ແລະເປັນການຊ່ວຍໃຫ້ພວກເຮົາໄດ້ເຂົ້າໃຈວ່າຕົວເອງຈະໄດ້ພົບປະສົບກັບຕົວເອງດ້ວຍຫົວໃຈທີ່ໄດ້ຮຽນ ແລະໄດ້ເຫັນຜູ້ທີ່ຫລົງຫາຍຢູ່ໃນໂລກຈາກການສັງເກດການຂອງພຣະເຈົ້າ. **ຄວາມອິດສາຣິສຍາຄົນອື່ນ, ແລະຄວາມເຫັນແກ່ຕົວຂອງພວກເຮົາຈະເຮັດໃຫ້ພວກເຮົາເປັນຄຣິສຕຽນທີ່ຕາບອດ ຄືພາດໂອກາດທີ່ຈະຮັກຄົນທັງຫລາຍເຫມືອນທີ່ພຣະເຈົ້າໄດ້ຊົງຮັກເຂົາ** ແລະຮັກພວກເຮົາເຊັ່ນດຽວກັນ. ພວກເຮົາແຕ່ລະຄົນກໍຕິດແລະຂັດສົນຢູ່ກັບຈຸດທີ່ມືດບອດ, ແຕ່ພວກເຮົາກໍຮຽນຮູ້ທີ່ຈະຕິດຕາມພຣະຄຣິດ, ແລ້ວພວກເຮົາກໍຈະໄດ້ພົບກັບຄວາມຍິນດີມີຮ່ວມກັບພຣະເຈົ້າໃນການປະກາດໂດຍຜ່ານການອະທິຖານ, ການຖວາຍ, ການອອກໄປ, ແລະການຊ່ວຍອູ້ມຊູພວກຜູ້ປະກາດທັງຫລາຍໃນໂລກ.

**( ອຸປຖັມໂດຍ ລຊບສ www.lsbf.org ) ອ.ຣ. ແປແລະຮຽບຮຽງ**